ນະຄອນຫຼວງວຽງຈັນ, ວັນທີ 30/04/2018

ບົດບັນທຶກ
ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:20 ໂມງ ຫາ 16:00 ໂມງ ຂອງວັນທີ 27 ເມສາ 2018 ທີ່ຫ້ອງປະຊຸມເບີ 04, ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 73 ທ່ານ, ຜູ້ມອບສິດຈຳນວນ 144 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 177.132.786 ຮຸ້ນ (ນັບທັງ 825.083 ຮຸ້ນ ທີ່ຖືກມອບສິດ), ບັນລຸອັດຕາສ່ວນ 85,273 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 30.590.514 ຮຸ້ນ ເທົ່າກັບ 14,727% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ມີດັ່ງນີ້:

1. ທ່ານ ຄຳສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ, ປະທານກອງປະຊຸມ.
2. ທ່ານ ພູຂົງ ຈັນທະຈັກ, ກຳມະການສະພາບໍລິຫານ, ຜູ້ອຳນວຍການ ທຄຕລ.
3. ທ່ານ ວຽງໄຊ ຈັນທະວິສຸກ, ກຳມະການສະພາບໍລິຫານ.
4. ທ່ານ ເດວິດ ແພຣ໋ອດ, ຕາງໜ້າຄູ່ຮ່ວມຍຸດທະສາດ, COFIBRED.

ພ້ອມດຽວກັນນີ້ ກໍ່ຍັງມີຜູ້ຕາງໜ້າຈາກ: ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ພ້ອມດ້ວຍສື່ມວນຊົນ ກໍ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ຫຼັງຈາກກ່າວເປີດກອງປະຊຸມຢ່າງເປັນທາງການແລ້ວ ທ່ານ ຄຳສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ ໃນຖານະປະທານກອງປະຊຸມໄດ້ແຈ້ງຕໍ່ຜູ້ຖືຮຸ້ນຮັບຮູ້ລະບຽບກອງປະຊຸມ ແລະ ວິທີການລົງຄະແນນສຽງ ຊຶ່ງມີເນື້ອໃນສຳຄັນໂດຍຫຍໍ້ດັ່ງນີ້:

- ການລົງຄະແນນສຽງ: ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ທີ່ໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມເທົ່ານັ້ນ ທີ່ມີສິດລົງຄະແນນສຽງ ໂດຍໜຶ່ງຮຸ້ນ ເທົ່າກັບ ໜຶ່ງສຽງ.
- ປະທານກອງປະຊຸມ ເປັນຜູ້ສະເໜີວາລະທີ່ຕ້ອງການໃຫ້ລົງຄະແນນສຽງ ໂດຍເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດບໍ່ເຫັນດີຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການສະເໜີດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງ) ແລະ ກ່ອນລົງຄະແນນສຽງແຕ່ລະວາລະ ປະທານ ຈະເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມບັນຫາທີ່ກ່ຽວຂ້ອງກ່ອນ.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217 904, 217898-9
ແຟັກ: (856-21) 213202, 223012, 223245, Website: www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- ການລົງຄະແນນສຽງບໍ່ເຫັນດີ ຈະມີຜົນສັກສິດກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ ຊຶ່ງສອດຄ່ອງກັບມາດຕາ 148 ຂອງກົດໝາຍວ່າດ້ວຍວິສາຫະກິດ (ຍົກເວັ້ນວາລະ ກ່ຽວກັບ ການປ່ຽນແປງກິດລະບຽບຂອງ ທຄຕລ ທີ່ຈຳເປັນຕ້ອງມີການລົງມະຕິສະເພາະ ຕາມມາດຕາ 149 ຂອງກົດໝາຍ ວ່າດ້ວຍວິສາຫະກິດ ແລະ ມາດຕາ 19 ຂອງກົດລະບຽບ ທຄຕລ).
- ກອງປະຊຸມ ຈະແຈ້ງຜົນການນັບຄະແນນສຽງກັບທີ່ຢູ່ໃນທີ່ປະຊຸມ ຫຼັງຈາກການລົງຄະແນນສຽງແຕ່ລະວາລະ.

ຫຼັງຈາກນັ້ນ, ທ່ານ ຄຳສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ ໃນຖານະປະທານກອງປະຊຸມ ໄດ້ ນຳພາກອງປະຊຸມເຂົ້າສູ່ແຕ່ລະວາລະ ໂດຍມອບໃຫ້ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ, ເປັນຜູ້ສະເໜີ ເນື້ອໃນຕໍ່ກອງປະຊຸມ ຊຶ່ງໄດ້ພິຈາລະນາ, ປະກອບຄຳເຫັນ ແລະ ລົງຄະແນນສຽງໃນແຕ່ລະວາລະ.

ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິໃນບັນຫາຕ່າງໆທີ່ກຳນົດໄວ້ໃນແຕ່ລະວາລະດັ່ງນີ້:

ວາລະທີ 1: ລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີ 2016 (ວາລະນີ້ບໍ່ມີການ ລົງຄະແນນສຽງ):

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ກ່ຽວກັບ ມະຕິຂອງກອງປະຊຸມ ຜູ້ຖືຮຸ້ນຄັ້ງຜ່ານມາດັ່ງນີ້:

- ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2016;
- ຮັບຮອງເງິນປັນຜົນປີ 2016 ຈຳນວນ 614 ກີບ/ຮຸ້ນ (ສຳເລັດການຈ່າຍເງິນປັນຜົນແລ້ວ)
- ຮັບຮອງແຜນການການຕ່າງໆ ປະຈຳປີ 2017
- ຮັບຮອງການຈ່າຍເງິນປັນຜົນຂອງ ທຄຕລ ປີ 2017 ແລະ ປີຕໍ່ໆໄປ 1 ຄັ້ງຕໍ່ປີ.
- ຮັບຮອງເອົາບໍລິສັດເອີນແອນຢັ້ງລາວຈຳກັດ ເປັນຜູ້ກວດສອບປະຈຳປີ 2017
- ຮັບຮອງແຜນຍຸດທະສາດໄລຍະຍາວ ຂອງ ທຄຕລ 2016-2020
- ຮັບຮອງການອອກຮຸ້ນເພີ້ມທຶນມູນຄ່າ 360 ຕື້ກີບ (ໄດ້ສຳເລັດການເພີ່ມທຶນແລ້ວ)
- ເພີ້ມອັດຕາສ່ວນຮຸ້ນ ທຄຕລ ທີ່ນັກລົງທຶນ ຕ່າງປະເທດສາມາດຖືຄອງຈາກ 1% ເປັນ 2% ຕໍ່ນັກລົງທຶນໜຶ່ງ ລາຍ; ນັກລົງທຶນພາຍໃນ ແລະ ຕ່າງປະເທດ ຖືຄອງຮຸ້ນ ທຄຕລ ໃນຕະຫຼາດຫຼັກຊັບລາວ ລວມກັນໄດ້ບໍ່ເກີນ 20% ຂອງຮຸ້ນ ທຄຕລ ທັງໝົດ.
- ທຄຕລ ໄດ້ປະຕິບັດຕາມການຮັບຮອງດັ່ງກ່າວແລ້ວ, ສຳລັບແຜນຍຸດທະສາດໄລຍະຍາວ ທຄຕລ ພວມສືບຕໍ່ ດຳເນີນຢູ່.

ທ່ານ ຄຳສຸກ ສູນດາລາ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ມີຄຳຖາມ ແລະ ສະແດງຄຳເຫັນ, ແຕ່ກໍ່ ບໍ່ມີຄຳຖາມ ຫຼື ຄຳເຫັນໃດໆຈາກຜູ້ຖືຮຸ້ນ.

- **ກອງປະຊຸມ ຮັບຊາບການລາຍງານຂອງຄະນະບໍລິຫານ ທຄຕລ.**

ວາລະທີ 2:ລາຍງານສະພາບພື້ນເດັ່ນໃນການດຳເນີນງານຂອງ ທຄຕລ ປະຈຳປີ 2017 ໂດຍຫຍໍ້ (ວາລະນີ້ບໍ່ມີການລົງຄະແນນສຽງ):

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ດັ່ງນີ້:

- ຄະນະຜູ້ບໍລິຫານ ທຄຕລ ໄດ້ເອົາໃຈໃສ່ໄກ້ຊິດຕິດແທດພະນັກງານ, ຊຸກຍູ້ພະນັກງານເອົາໃຈໃສ່ປະຕິບັດວຽກງານດ້ວຍຄວາມຮັບຜິດຊອບສູງ ຫຼີກເວັ້ນບໍ່ໃຫ້ມີປະກົດການຫຍໍ້ທໍ້ຕ່າງໆ.
- ໄດ້ເຜີຍແຜ່ແຜນຍຸດທະສາດໄລຍະຍາວ 2016-2020 ແລະ ແຜນການປີ 2017 ໃຫ້ສາຂາທົ່ວລະບົບ.
- ສຳເລັດການດຳເນີນການຂາຍຮຸ້ນສາມັນເພີ່ມທຶນຂອງ ທຄຕລ ຈຳນວນ 360 ຕື້ກີບ.
- ດຳເນີນໂຄງການບາເຊເ2 ແລະ ດຳເນີນໂຄງການສ້າງໂປຼແກຣມສິນເຊື່ອແບບໃໝ່.
- ທຄຕລ ໄດ້ເປີດນຳໃຊ້ລະບົບຊຳລະຄ່າທຳນຽມທາງແບບທັນສະໄໝ ຜ່ານເຄົາເຕີບໍລິການ ທຄຕລ, ຜ່ານ BCEL One, ຜ່ານຕູ້ Kiosk ຊຳລະອັດຕະໂນມັດ ແລະ ຜ່ານຕົວແທນເງິນດ່ວນຊຸມຊົນຂອງ ທຄຕລ.
- ສຳເລັດການພັດທະນາການຊຳລະສິນຄ້າແບບທັນສະໄໝຜ່ານ QR Code ຫຼື OnePay ທີ່ເປັນສ່ວນໜຶ່ງ ຂອງຜະລິດຕະພັນ BCEL One. ປະຈຸບັນ ທຄຕລ ໄດ້ຮ່ວມມືກັບ ທະນາຄານທະນະຊາດຂອງປະເທດໄທ ໃນການຊຳລະສິນຄ້າ-ບໍລິການ ລະຫວ່າງ ລາວ-ໄທ ໂດຍການເຊື່ອມຕໍ່ລະບົບ BCEL One ກັບລະບົບ Prompt Pay ຂອງປະເທດໄທ.
- ທຄຕລ ໄດ້ຮັບລາງວັນທະນາຄານດີເດັ່ນດ້ານການດຳເນີນງານ, ວຽກງານການໂອນເງິນລະຫວ່າງປະເທດ ປະຈຳປີ 2016 (Operational Exellence Award) ແລະ ລາງວັນທະນາຄານດີເດັ່ນພາຍໃນ ປະຈຳປີ 2017 (Domestic Retail Bank of The Year 2017)
- ໄດ້ຂະຫຍາຍຕາໜ່າງການບໍລິການ: 5 ໜ່ວຍບໍລິການ, ຕິດຕັ້ງຕູ້ ATM ໄດ້ 27 ຕູ້ ລວມທັງໝົດ 365 ຕູ້, ຕິດຕັ້ງເຄື່ອງຮູດບັດ EDC ໄດ້ 336 ລວມມີທັງ ໝົດ 2.062 ເຄື່ອງ.
- ໄດ້ສະໜອງຂໍ້ມູນໃນການລົງກວດສອບຈາກພາຍນອກ: ອົງການກວດສອບແຫ່ງລັດ, ກົມຄຸ້ມຄອງທະນາຄານ ທຸລະກິດ ທຫລ ແລະ ບໍລິສັດ E&Y.

ທ່ານ ຄຳສຸກ ສູນດາລາ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ມີຄຳຖາມ ແລະ ສະແດງຄຳເຫັນ, ແຕ່ກໍ່ບໍ່ມີຄຳຖາມ ຫຼື ຄຳເຫັນໃດໆຈາກຜູ້ຖືຮຸ້ນ.

- **ກອງປະຊຸມ ຮັບຊາບລາຍງານ ກ່ຽວກັບ ການດຳເນີນງານແຕ່ລະດ້ານຂອງ ທຄຕລ.**

ວາລະທີ 3: ພິຈາລະນາແລະຮັບຮອງແຜນການຂາຍຮຸ້ນໃນ ທຄຕລ ທີ່ຖືໂດຍກະຊວງການເງິນ 19%:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ດັ່ງນີ້:

- ກະຊວງການເງິນ ຊຶ່ງຕາງໜ້າໃຫ້ລັດຖະບານຖືຮຸ້ນຢູ່ ທຄຕລ ໄດ້ເຫັນດີຫລຸດສັດສ່ວນການຖືຮຸ້ນລົງຈາກ 70% ໃນປະຈຸບັນ ເປັນ 51%. ການຫຼຸດສັດສ່ວນຖືຮຸ້ນດັ່ງກ່າວ ກໍ່ເພື່ອເປັນການເປີດໂອກາດໃຫ້ນັກລົງທຶນໄດ້ມີໂອກາດຮ່ວມເປັນເຈົ້າຂອງ ທຄຕລ ໄດ້ຫຼາຍຂຶ້ນ ແລະ ເປີດໂອກາດຮັບເອົາຄູ່ຮ່ວມຖືຮຸ້ນຍຸດທະສາດທີ່ມີຂີດຄວາມສາມາດ ແລະ ເປັນທີ່ຍອມຮັບຂອງສາກົນ.
- ສຳລັບຂັ້ນຕອນການຂາຍຮຸ້ນດັ່ງກ່າວ ກະຊວງການເງິນໄດ້ມອບໝາຍໃຫ້ ທຄຕລ ດຳເນີນການສັນຫາທີ່ປຶກສາ ເພື່ອຄົ້ນຄວ້າຫາງເລືອກທີ່ເໝາະສົມ ແລະ ເຮັດໃຫ້ການຂາຍຮຸ້ນຄັ້ງນີ້ສຳເລັດພາຍໃນໄຕມາດ 2 ປີ 2018

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍ່ບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

- **ມະຕິກອງປະຊຸມ: ໄດ້ຮັບຮອງເອົາການຫລຸດສັດສ່ວນການຖືຮຸ້ນ ກະຊວງການເງິນລົງຈາກ 70% ໃນປະຈຸບັນເປັນ 51% ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:**
  - ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດ 2017

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ກ່ຽວກັບ ຜົນການດຳເນີນທຸລະກິດປະຈຳປີ 2017 (ມາດຖານສາກົນສະເພາະກິດຈະການ) ໄດ້ຮັບການກວດສອບຈາກບໍລິສັດເອີນແອນຢັ້ງລາວຈຳກັດ, ແລະ ຖືກຮັບຮອງຈາກສະພາບໍລິຫານ ທຄຕລ ມີດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: **35.801.567** ລ້ານກີບ
- ຍອດສິນເຊື່ອທັງໝົດ: **22.586.284** ລ້ານກີບ
- ຍອດເງິນຝາກທັງໝົດ: **31.518.874** ລ້ານກີບ
- ກຳໄລກ່ອນອາກອນ: **373.186** ລ້ານກີບ
- ກຳໄລຫຼັງອາກອນ: **290.410** ລ້ານກີບ

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

- **ມະຕິກອງປະຊຸມ: ໄດ້ຮັບຮອງເອົາຜົນການດຳເນີນທຸລະກິດ ທຄຕລ ປະຈຳປີ 2017 ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ :**
  - ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາຮັບຮອງເງິນປັນຜົນຮຸ້ນ ທຄຕລ ປະຈຳປີ 2017.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ດັ່ງນີ້:

ຫຼັງການຫັກອາກອນ ແລະ ສ້າງຄັງຕ່າງໆຕາມລະບຽບການແລ້ວ, ເງິນປັນຜົນໃຫ້ຜູ້ຖືຮຸ້ນ ທຄຕລ ທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນມື້ປິດປຶ້ມທະບຽນຜູ່ຖືຮຸ້ນ ໃນວັນທີ 05 ເມສາ 2018 ເພື່ອກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2017 ມີອັດຕາການປັນຜົນເທົ່າກັບ 712 ກີບ/ຮຸ້ນ. ການຈ່າຍເງິນປັນຜົນໃຫ້ສຳເລັດພາຍໃນ 5 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້ ແລະ ຄາດວ່າຈະໃຫ້ສຳເລັດໃນວັນທີ 07/05/2018.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

- **ມະຕິກອງປະຊຸມ: ໄດ້ຮັບຮອງເອົາເງິນປັນຜົນຮຸ້ນ ທຄຕລ ປະຈຳປີ 2017 ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ :**
  - ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະ 6: ພິຈາລະນາ ຮັບຮອງສະມາຊິກສະພາບໍລິຫານ ທຄຕລ ວາລະປີ 2018-2020 ດັ່ງນີ້:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ດັ່ງນີ້:

ອີງຕາມກົດລະບຽບຂອງ ທຄຕລ, ສະມາຊິກສະພາບໍລິຫານ ມີວາລະ 2 ປີ ແລະ ການແຕ່ງຕັ້ງສະມາຊິກສະພາບໍລິຫານແຕ່ລະຊຸດ ຕ້ອງຜ່ານການເຫັນດີຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ.

ສະພາບໍລິຫານຂອງ ທຄຕລ ໄດ້ຮອດກຳນົດ, ຜ່ານມາ ທຄຕລ ໄດ້ນຳສະເໜີຜ່ານກະຊວງການເງິນ ໃນການຄົ້ນຄວ້າສະມາຊິກສະພາບໍລິຫານຊຸດໃໝ່ຂອງ ທຄຕລ ວາລະ 2018-2020 ດັ່ງນີ້:

1. ທ່ານ ປອ. ບຸນເຫຼືອ ສິນໄຊວໍລະວົງ ຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ ເປັນປະທານ
2. ທ່ານ ຄຳສຸກ ສູນດາລາ ພະນັກງານອາວຸໂສ (ບຸກຄົນເອກະລາດພາຍນອກ) ເປັນຮອງປະທານ
3. ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ເປັນກຳມະການ
4. ທ່ານ Marc Robert ຕາງໜ້າ COFIBRED ໃນນາມຄູ່ຮ່ວມຍຸດທະສາດ ເປັນກຳມະການ
5. ທ່ານ ພຸດທະຂັນ ຂັນຕີ ຮອງຫົວໜ້າຄັງເງິນແຫ່ງຊາດ ເປັນກຳມະການ
6. ທ່ານ ຮສ.ປອ ພູເພັດ ກ້ຽວພິລາວົງ ຮອງຄະນະບໍດີຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະໄລແຫ່ງຊາດ (ບຸກຄົນເອກະລາດພາຍນອກ) ເປັນກຳມະການ
7. ທ່ານ ວຽງສຸກ ຈຸນທະວົງ ຫົວໜ້າພະແນກຄຸ້ມຄອງສິນເຊື່ອ ເປັນກຳມະການ

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

- **ມະຕິກອງປະຊຸມ: ໄດ້ຮັບຮອງເອົາສະມາຊິກສະພາບໍລິຫານຊຸດໃໝ່ຂອງ ທຄຕລ ວາລະ 2018-2020 ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:**
  - ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະ 7: ພິຈາລະນາ ແລະ ຮັບຮອງເອົາການປັບປຸງລະບຽບ ທຄຕລ

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ດັ່ງນີ້:

ການປັບປຸງກົດລະບຽບຂອງ ທຄຕລ ເພື່ອໃຫ້ສອດຄ່ອງກັບທຶນຈົດທະບຽນໃໝ່ທີ່ໄດ້ເພີ່ມຂຶ້ນ ແລະ ເພື່ອໃຫ້ສອດຄ່ອງກັບການປັບປຸງເງື່ອນໄຂ, ສິດໜ້າທີ່ ແລະ ອົງປະກອບຂອງສະພາບໍລິຫານຂອງບໍລິສັດຈົດທະບຽນ ຕາມລະບຽບທີ່ ຄຄຊ ໄດ້ວາງອອກ. ນອກຈາກນີ້ກໍ່ໄດ້ມີການຍົກເລີກຄະນະກວດສອບຂອງຜູ້ຖືຮຸ້ນ ຕາມການເຫັນດີຂອງກະຊວງການເງິນ. ພ້ອມທັງໄດ້ປັບປຸງຕື່ມບາງຈຸດປີກຍ່ອຍ ເພື່ອເຮັດໃຫ້ມີຄວາມຮັດກຸມທາງດ້ານກົດໝາຍ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງ ທຄຕລ ໃນໄລຍະໃໝ່ ເຊິ່ງກົດລະບຽບສະບັບນີ້ ໄດ້ກຳນົດຫຼັກການ, ວິທີການໃນການບໍລິຫານຈັດການ ກ່ຽວກັບ ຮຸ້ນ, ຜູ້ຖືຮຸ້ນ, ສະພາບໍລິຫານ, ເລຂານຸການບໍລິສັດ (ເລຂານຸການສະພາບໍລິຫານ), ຜູ້ອຳນວຍການ, ພະນັກງານ, ການແບ່ງປັນຜົນປະໂຫຍດ, ການແກ້ໄຂຂໍ້ຂັດແຍ່ງ, ການຍຸບເລີກ ແລະ ການຊຳລະສະສາງຂອງ ທຄຕລ ເພື່ອເປັນບ່ອນອີງດ້ານກົດໝາຍໃນການເຄື່ອນໄຫວດຳເນີນທຸລະກິດ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ ຊຶ່ງທ່ານໄດ້ແຈ້ງຕໍ່ທີ່ປະຊຸມວ່າ ອີງຕາມມາດຕາ 149 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ມາດຕາ 19 ຂອງກົດ ລະບຽບ ທຄຕລ, ການປ່ຽນແປງກົດລະບຽບຂອງ ທຄຕລ

ຈະເປັນການລົງມະຕິແບບ ສະເພາະ ຊຶ່ງຈະມີຜົນສັກສິດໃນເມື່ອມີຄະແນນສຽງເຫັນດີຢ່າງໜ້ອຍ ສອງສ່ວນສາມຂອງ ຈຳນວນສຽງ ທັງໝົດໃນທີ່ປະຊຸມ ແລະ ເທົ່າກັບ ຢ່າງໜ້ອຍ 80% ຂອງຈຳນວນຮຸ້ນທັງໝົດ.

- **ມະຕິກອງປະຊຸມ: ໄດ້ຮັບຮອງເອົາການປັບປຸງກົດລະບຽບຂອງ ທຄຕລ ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:**
  - ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 85.273% ຂອງຈຳນວນຮຸ້ນທັງໝົດ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2018:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ດັ່ງນີ້:

- ຍອດຊັບສິນ: ເພີ້ມຂຶ້ນ 9% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2017,
- ຍອດເງິນຝາກ: ເພີ້ມຂຶ້ນ 5% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2017,
- ຍອດເງິນກູ້: ເພີ້ມຂຶ້ນ 8% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2017,
- ກຳໄລກ່ອນອາກອນ: 400 ຕື້ກີບ, ເພີ້ມຂຶ້ນ 7% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2017,
- ແຜນຮັບພະນັກງານໃໝ່ທົ່ວລະບົບຈຳນວນ 216 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ້ມ 1 ສາຂາ ແລະ 9 ໜ່ວຍບໍລິການໃນທົ່ວປະເທດ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງ ສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

- **ມະຕິກອງປະຊຸມ: ໄດ້ຮັບຮອງເອົາແຜນການປະຈຳປີ 2018 ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:**
  - ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງຜູ້ກວດສອບ ທຄຕລ ສຳລັບປີ 2018.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ດັ່ງນີ້:

ອີງຕາມການຄົ້ນຄວ້າ, ສົມທຽບເງື່ອນໄຂຕ່າງໆ ແລະ ລາຄາ, ທຄຕລ ໄດ້ເລືອກເອົາບໍລິສັດເອີນແອນຢັ້ງລາວ ຈຳກັດເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2018, 93.000 USD (ເກົ້າສິບສາມພັນໂດລາສະຫະລັດ ຖ້ວນ) ລາຄາເທົ່າກັບການກວດສອບໃນປີ 2016, 2017, ໃນນັ້ນລວມມີການກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວ-ພາສາອັງກິດ, ທົບທວນຖານະການເງິນປະຈຳ 6 ເດືອນ ແລະ ປະຈຳປີ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງ ສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

- **ມະຕິກອງປະຊຸມ: ໄດ້ຮັບຮອງເອົາບໍລິສັດກວດສອບ ທຄຕລ ປະຈຳປີ 2018 ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:**
  - ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ພາກການຖາມ-ຕອບໃນບັນຫາອື່ນໆ:

ພາຍຫຼັງທີ່ກອງປະຊຸມໄດ້ພິຈາລະນາຄົບຖ້ວນທຸກວາລະແລ້ວ, ປະທານກອງປະຊຸມ ຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ມີຄຳຖາມ ຫຼື ສະແດງຄຳເຫັນຕໍ່ບັນຫາອື່ນໆ ທີ່ບໍ່ໄດ້ລະບຸໃນວາລະຂອງກອງປະຊຸມ ເຊິ່ງໄດ້ມີບາງຄຳຖາມ ຈາກຜູ້ຖືຮຸ້ນ ແລະ ມີການອະທິບາຍຊີ້ແຈງຈາກທ່ານຜູ້ອຳນວຍການໃຫຍ່ ດັ່ງນີ້:

1. ທ່ານ ແສງປະເສີດ, ຜູ້ຖືຮຸ້ນ: ດີໃຈນຳທີ່ ທຄຕລ ໄດ້ຮັບການເຫັນດີຈາກຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມໃນທຸກວາລະ, ແຕ່ມີຄຳເຫັນກ່ຽວກັບແຜນບຸລິມະສິດໃນປີ 2018 ເພາະບໍ່ເຫັນໄດ້ປັດໃຈໃດທີ່ຈະເຮັດໃຫ້ ທຄຕລ ມີຜົນກຳໄລດີຂຶ້ນໃນ ປີ 2018 ເພາະວ່າປະຈຸບັນມີທະນາຄານຫຼາຍຂຶ້ນ, ການແຂ່ງຂັນສູງຂຶ້ນ ໂດຍສະເພາະມີທະນາຄານຕ່າງປະເທດເຂົ້າມາ ຫຼາຍ, ແຕ່ແຜນຍຸດທະສາດຂອງ ທຄຕລ ບໍ່ມີອັນພົ້ນເດັ່ນທຽບປີຜ່ານມາ.
   - ຄຳເຫັນອີກອັນໜຶ່ງແມ່ນ: ແຜນຮັບພະນັກງານໃໝ່ໃນປີ 2018 ມີຄວາມຈຳເປັນຕໍ່ການຂະຫຍາຍທຸລະກິດຕາມຍຸດທະ ສາດບໍ່? ຕາມປະສົບການເຫັນວ່າ ການບໍລິການຂອງ ທຄຕລ ບາງສາຂາຢູ່ຕ່າງແຂວງ ຍັງຊັກຊ້າ ເມື່ອທຽບກັບ ການ ບໍລິການທະນາຄານອື່ນ ຜູ້ບໍລິຫານຈະມີວິທີການແນວໃດເພື່ອແກ້ໄຂໃຫ້ໄວຂຶ້ນ?
   - ຢູ່ຕ່າງແຂວງຕູ້ ATM ບໍ່ຫຼາຍ ແລະ ມັກມີບັນຫາຂັດຂ້ອງ ສະເໜີໃຫ້ເພີ່ມຕູ້ ແລະ ປັບປຸງການບໍລິການຕື່ມ.
   - ➢ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ: ໃນແຜນປະຕິບັດງານ 2018 ໄດ້ຂຶ້ນແຜນຍຸດທະສາດແຕ່ລະ ດ້ານລະອຽດ, ຊຶ່ງ ທຄຕລ ເນັ້ນໃສ່ປັບປຸງຖານະການເງິນໃຫ້ໄດ້ມາດຖານ, ປັບປຸງການບໍລິການໃຫ້ດີຂຶ້ນ, ພະຍາຍາມ ຄຸ້ມຄອງສິນເຊື່ອ ໂດຍສະເພາະຄຸ້ມຄອງໜີ້ NPL, ຄຸ້ມຄອງລາຍຈ່າຍບໍລິຫານ ແລະ ຂະຫຍາຍຜະລິດຕະພັນທາງເອ ເລັກໂທນິກ, ໃນແຕ່ລະໄຕມາດ ທຄຕລ ກໍ່ທົບທວນການດຳເນີນວຽກງານ ແລະ ມີການເປີດເຜີຍຂໍ້ມູນຕໍ່ສັງຄົມໃນແຕ່ ລະໄລຍະ. ຜ່ານມາ ທຄຕລ ຍັງມີການຂະຫຍາຍຕາໜ່າງບໍລິການ, ຂະຫຍາຍຜະລິດຕະພັນ, ແລະ ສ່ວນແບ່ງການ ຕະຫຼາດຂອງ ທຄຄຕລ ແຕ່ລະດ້ານກໍ່ຍັງນຳໜ້າຢູ່.
   - ຕໍ່ກັບແຜນຮັບພະນັກງານ: ໃນປີຜ່ານມາ ທຄຕລ ຂຶ້ນແຜນຮັບ 90 ຄົນ ແຕ່ຮັບຕົວຈິງພຽງ 60 ກວ່າຄົນ. ສຳລັບໃນປີ 2018 ມີແຜນການຂະຫຍາຍ 1 ສາຂາ ແລະ ໜ່ວຍບໍລິການ 9 ໜ່ວຍ. ສະນັ້ນ, ເພື່ອຮອງຮັບວຽກງານບໍລິການລູກຄ້າ ໃຫ້ດີຂຶ້ນ ແລະ ເພື່ອທົດແທນພະນັກງານທີ່ອອກພັກຜ່ອນ ຈຶ່ງໄດ້ຂຶ້ນແຜນການຮັບພະນັກງານຈຳນວນ 216 ຄົນ.
   - ຕໍ່ກັບບັນຫາທີ່ພົບເຫັນໃນວຽກງານບໍລິການ, ທຄຕລ ຂໍຂອບໃຈໃນການສົ່ງຂ່າວ, ແຕ່ໄລຍະຜ່ານມາ ທຄຕລ ກໍ່ໄດ້ ເອົາໃຈໃສ່ໃນການແກ້ໄຂດ້ວຍຫຼາຍວິທີການ, ເປັນຕົ້ນແມ່ນພັດທະນາລະບົບເພື່ອການບໍລິການໃຫ້ໄວຂຶ້ນ ແລະ ພະຍາຍາມຫັນການບໍລິການສູ່ລະບົບເອເລັກໂທນິກຫຼາຍຂຶ້ນ ຊຶ່ງເຫັນວ່າມີລູກຄ້າທີ່ໃຊ້ບໍລິການຜ່ານລະບົບເອເລັກ ໂທນິກຫຼາຍຂຶ້ນກວມເອົາປະມານ 65% ຂອງຈຳນວນທຸລະກຳ.
2. ທ່ານ ອິນສຸພອນ, ຜູ້ຖືຮຸ້ນ: ໂດຍລວມກໍ່ເຫັນດີໃນແຕ່ລະວາລະ ແຕ່ຂໍມີຄຳຖາມ ກ່ຽວກັບ ເງິນປັນຜົນຮຸ້ນ 712 ກີບ/ ຮຸ້ນ ໄດ້ມາຈາກກຳໄລຫຼັງອາກອນບໍ່. ຖ້າແຜນການ 2018 ໄດ້ຕາມແຜນທີ່ຂຶ້ນໄວ້ ຈະໄດ້ເງິນປັນຜົນເທົ່າ ຫຼື ຫຼາຍກວ່າ ເກົ່າບໍ່?
   - ➢ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ: ຕໍ່ກັບເງິນປັນຜົນທີ່ຜ່ານມາ ທຄຕລ ໄດ້ໃຫ້ຄຳໝັ້ນສັນຍາກັບຜູ້ຖື ຮຸ້ນ ແມ່ນ ທຄຕລ ຈະປັນຜົນບໍ່ໃຫ້ຫຼຸດ 50% ຂອງກຳໄລຫຼັງອາກອນຂອງແຕ່ລະປີ, ໃນເງິນປັນຜົນ 712 ກີບ/ຮຸ້ນນີ້ ແມ່ນໄດ້ປັນຈາກກຳໄລຫຼັງອາກອນປີ 2017. ນອກນັ້ນ ທຄຕລ ກໍ່ໄດ້ແບ່ງກຳໄລສ່ວນໜຶ່ງເຂົ້າຄັງຕ່າງໆຕາມລະບຽບການ ແລະ ເພື່ອການຂະຫຍາຍທຸລະກິດຕໍ່ໜ້າ. ສຳລັບປີ 2018, ທຄຕລ ກຳລັງດຳເນີນຕາມແຜນທີ່ໄດ້ວາງໄວ້.
3. ທ່ານ ພອນເພັດ, ບໍລິສັດຫຼັກຊັບລາວ-ຈີນ: ຜ່ານມາ BCEL One ໄດ້ເຊື່ອມໂຍງລະບົບກັບທະນາຄານໃນປະເທດໄທ ຈຶ່ງຢາກຮູ້ວ່າໃນຕໍ່ໜ້າ ທຄຕລ ຈະເຊື່ອມໂຍງກັບທະນາຄານອື່ນຂອງຕ່າງປະເທດອີກບໍ?

- ➢ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ: ໃນສະມາຄົມທະນາຄານອາຊຽນກໍ່ໄດ້ມີການປະສານງານ ແລະ ສຶກສາເງື່ອນໄຂການຮ່ວມມືດ້ານບໍລິການ - ການເຊື່ອມໂຍງລະບົບຂອງບັນດາທະນາຄານ. ຜ່ານມາ ທຄຕລ ໄດ້ເຊື່ອມກັບລະບົບ Prompt Pay ຂອງໄທ, ນອກນີ້ ທຄຕລ ຍັງສຶກສາຄວາມເປັນໄປໄດ້ໃນການເຊື່ອມໂຍງກັບລະບົບ WeChat ຂອງຈີນ ແລະ ພາກສ່ວນອື່ນຕື່ມອີກ.

4. ທ່ານ ແສງປະເສີດ, ຜູ້ຖືຮຸ້ນ: ການບໍລິການທາງເອເລັກໂທນິກຂອງ ທຄຕລ ກວມ 65%, ຢາກຮູ້ວ່າໃນຕໍ່ໜ້າ ທຄຕລ ຈະມີການບໍລິການຈ່າຍເງິນຜ່ານເອເລັກໂທນິກຫຼາກຫຼາຍຂຶ້ນບໍ່ ເພື່ອຈະເປັນຈຸດສິນໃຈ ແລະ ດຶງດູດລູກຄ້າ, ການບໍລິການໄວຂຶ້ນ ແລະ ລູກຄ້າກໍ່ບໍ່ຕ້ອງເຂົ້າໄປທະນາຄານ?

- ➢ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ: ທຄຕລ ມີຄວາມພະຍາຍາມໃນການພັດທະນາດ້ານເອເລັກໂທນິກ, ການບໍລິການຜ່ານ BCEL One ກໍ່ໄດ້ມີ Onepay ທີ່ເປັນການຊຳລະເງິນຜ່ານ QR Code ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດ ແລະ ສ້າງຄວາມສະດວກໃຫ້ລູກຄ້າ ເຊິ່ງຜ່ານມາກໍ່ມີເງິນໝຸນວຽນຜ່ານລະບົບດັ່ງກ່າວປະມານ 14 ຕື້ ກວ່າກີບນັບແຕ່ໄດ້ເປີດນຳໃຊ້. ນອກຈາກນີ້ ທຄຕລ ກໍຍັງຈະສືບຕໍ່ພັດທະນາຜະລິດຕະພັນອີເລັກໂທນິກອື່ນໆ ມາຮັບໃຊ້ສັງຄົມຕື່ມອີກ.

5. ຄຳຖາມຈາກຜູ້ຖືຮຸ້ນ: ແຜນກຳໄລໃນປີ 2017 ຈຳນວນ 250 ຕື້ກີບ ແຕ່ຕົວຈິງປະຕິບັດໄດ້ເກີນແຜນ, ຢາກຮູ້ວ່າປັດໃຈໃດທີ່ເຮັດໃຫ້ກຳໄລສູງເກີນແຜນດັ່ງກ່າວ?

- ➢ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ: ໃນປີ 2017 ທຄຕລ ສາມາດສ້າງກຳໄລໄດ້ເກີນແຜນ ຍ້ອນການຂະຫຍາຍການບໍລິການ ກໍ່ຄືຜະລິດຕະພັນຕ່າງໆປະຕິບັດໄດ້ລື່ນແຜນ, ມີການປະຢັດ-ຄຸ້ມຄອງລາຍຈ່າຍ, ການຄຸ້ມຄອງບໍລິຫານດ້ານເງິນກູ້ ທີ່ເປັນລາຍຮັບຫຼັກຂອງ ທຄຕລ (ກວມ 70% ຂອງລາຍຮັບທັງໝົດ) ຢ່າງມີປະສິດທິຜົນ, ລາຍຈ່າຍຄ້າງແຮ ຫຼື ຄ່າເຊື່ອມສິນເຊື່ອ ຢູ່ໃນຂອບເຂດທີ່ແຜນການກຳນົດໄວ້ ເຮັດໃຫ້ກຳໄລປະຕິບັດໄດ້ເກີນແຜນການ.

6. ທ່ານ ພອນປະເສີດ, ຜູ້ຖືຮຸ້ນ: ຂໍສະເໜີກ່ຽວກັບຕູ້ຝາກເງິນທີ່ບໍ່ທັນພຽງພໍ, ແຕ່ກ່ອນຕິດຕັ້ງໄວ້ໃນ ມຊ ແຕ່ໄດ້ຍ້າຍອອກໄປ, ທຄຕລ ມີທິດທາງໃນການຂະຫຍາຍແນວໃດ?

- ➢ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ: ຕູ້ຝາກເງິນເປັນຜະລິດຕະພັນໜຶ່ງຂອງ ທຄຕລ ທີ່ຮັບໃຊ້ສັງຄົມ ສາມາດຮັບເງິນຝາກສະກຸນກີບ, ບາດ ແລະ ໂດລາ, ໃນປີ 2018 ມີແຜນຂະຫຍາຍເພີ່ມ 18 ຕູ້. ເງື່ອນໄຂໃນການຝາກເງິນບໍ່ເກີນ 50 ໃບ/ຄັ້ງ ແລະ ສະພາບເງິນບໍ່ເກົ່າຫຼາຍ, ແຕ່ການນຳໃຊ້ຂອງລູກຄ້າຈຳນວນໜຶ່ງຍັງບໍ່ທັນມີຄວາມເຂົ້າໃຈ ເຊັ່ນ: ໃສ່ເງິນຫຼາຍເກີນຈຳນວນທີ່ກຳນົດ, ບາງຄັ້ງກໍ່ໃສ່ເງິນເຂົ້າໄປທັງທີ່ຍັງມັດຢາງຢູ່ ເຮັດໃຫ້ຕູ້ຂັດຂ້ອງ. ຢູ່ ມຊ ກໍ່ເຊັ່ນກັນ ຍັງມີບັນຫາທີ່ເກີດຈາກການນຳໃຊ້ອັນບໍ່ຖືກຕ້ອງຂອງລູກຄ້າ ທຄຕລ ຈຶ່ງໄດ້ຖອນອອກໄປໄວ້ສາຂາດົງໂດກ ເພື່ອໃຫ້ມີຜູ້ໃຫ້ຄຳແນະນຳແກ່ລູກຄ້າ. ທຄຕລ ກຳລັງໂຄສະນາການນຳໃຊ້ຜ່ານຫຼາຍຊ່ອງທາງໃຫ້ລູກຄ້າເຂົ້າໃຈການນຳໃຊ້ ແລະ ຕໍ່ໜ້າກໍ່ອາດຈະມີການຕິດຕັ້ງຄືນຢູ່ເຂດ ມຊ ແລະ ຫຼາຍໆຈຸດຕື່ມ.

7. ຄຳຖາມຈາກຜູ້ຖືຮຸ້ນ: ບໍລິສັດກວດສອບທີ່ເປັນບໍລິສັດເກົ່າຫຼາຍປີ ຈະເປັນສິ່ງທີ່ກະທົບຕໍ່ຄວາມເຊື່ອໝັ້ນໄດ້ບໍ? ຕໍ່ໜ້າຈະປ່ຽນບໍລິສັດກວດສອບອື່ນບໍ?

- ➢ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ: ຜ່ານມາ ທຄຕລ ໄດ້ແຈ້ງໃຫ້ບັນດາບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ໃຫ້ສາມາດກວດສອບບໍລິສັດຈົດທະບຽນ ເຊິ່ງກໍ່ມີ 4 ບໍລິສັດ ເພື່ອຮ່ວມສະເໜີລາຄາກວດກສອບ ທຄຕລ. ແຕ່ເຫັນວ່າບໍ່ມີການຕອບຮັບຈາກບໍລິສັດອື່ນພໍເທົ່າໃດ, ບາງບໍລິສັດອື່ນທີ່ໄດ້ສົ່ງລາຄາມາສະເໜີກໍ່ເປັນລາຄາທີ່ສູງຫຼາຍ ຊຶ່ງສູງກວ່າບໍລິສັດເອິນສ໌ແອນຢັງລາວຈຳກັດ ປະມານ 3 ເທົ່າ. ສຳລັບບໍລິສັດເອິນສ໌ແອນຢັງ ລາວ ຈຳກັດ ເຖິງວ່າຈະເປັນຜູ້ກວດສອບ ທຄຕລ ມາຫຼາຍປີແລ້ວ ແຕ່ກໍ່ເປັນບໍລິສັດທີ່ມີປະສົບການສູງການການກວດສອບທະນາຄານ ແລະ ເປັນທີ່ຍອມຮັບຂອງສາກົນ. ທຄຕລ ໄດ້ມີການລາຍງານ ແລະ ຂໍທິດຊີ້ນຳຈາກຜູ້ຄຸ້ມຄອງເຊັ່ນ: ສຄຄຊ ແລະ ທະນາຄານແຫ່ງ ສປປ ລາວ ກ່ຽວກັບ ບັນຫານີ້ ຊຶ່ງໃນການໃຊ້ບໍລິການກວດສອບ ກໍ່ໄດ້ມີເງື່ອນໄຂໃນ

ການປ່ຽນທີມງານກວດສອບ ບໍ່ໃຫ້ແມ່ນທີມງານເດີມ. ໃນຕໍ່ໜ້າ ທຄຕລ ກໍ່ຈະພະຍາຍາມເຊີນຊວນບໍລິສັດກວດສອບອື່ນໃຫ້ເຂົ້າຮ່ວມສະເໜີລາຄາ ເພື່ອໃຫ້ສາມາດຄັດເລືອກເອົາບໍລິສັດ ອື່ນມາເປັນກວດສອບຖານະການເງິນຂອງ ທຄຕລ.

ເມື່ອເຫັນວ່າບໍ່ມີຄຳເຫັນໃດໆອີກຕໍ່ໄປແລ້ວ, ທ່ານ ຄຳສຸກ ສູນດາລາ, ປະທານກອງປະຊຸມ, ໄດ້ກ່າວຂອບໃຈ ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າ ທີ່ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ປະກອບຄຳຄິດເຫັນອັນມີຄຸນຄ່າຕໍ່ກອງປະຊຸມ ຊຶ່ງ ທຄຕລ ຈະໄດ້ນຳໄປພິຈາລະນາປັບປຸງໃຫ້ດີຂຶ້ນ. ຈາກນັ້ນ ທ່ານປະທານກອງປະຊຸມ ໄດ້ປະກາດປິດກອງປະຊຸມ ໃນ ເວລາ 16:00 ໂມງ ຂອງວັນດຽວກັນ.

ດັ່ງນັ້ນ ຈຶ່ງໄດ້ເຮັດບົດບັນທຶກກອງປະຊຸມສະບັບນີ້ໄວ້ ເພື່ອເປັນບ່ອນອີງສຳຄັນ ສຳລັບການເປີດເຜີຍຂໍ້ມູນໃຫ້ຜູ້ຖືຮຸ້ນ, ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ການຈັດຕັ້ງປະຕິບັດ.

ປະທານກອງປະຊຸມ

ຄຳສຸກ ສູນດາລາ

ຜູ້ບັນທຶກ

ນ.ພອນດາສຸກ